ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 329 /ລບ
ນະຄອນຫຼວງວຽງຈັນ, ວັນທີ 25. 10. 2017

# ດໍາລັດ
## ວ່າດ້ວຍການປົກປ້ອງເງິນຝາກ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1995;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມໜັງສືສະເໜີຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 170/ທຫລ, ລົງວັນທີ 12 ພຶດສະພາ 2017.

## ລັດຖະບານ ອອກດໍາລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດໍາລັດສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາການເຄື່ອນໄຫວວຽກງານປົກປ້ອງເງິນຝາກ ເພື່ອຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຝາກເງິນ ແນໃສ່ສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມຕໍ່ລະບົບສະຖາບັນການເງິນ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບ ແລະ ພັດທະນາລະບົບສະຖາບັນການເງິນຂອງ ສປປ ລາວ.

**ມາດຕາ 2 ການປົກປ້ອງເງິນຝາກ**

ການປົກປ້ອງເງິນຝາກ ແມ່ນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ຝາກເງິນທີ່ຝາກໄວ້ກັບສະມາຊິກຂອງສໍານັກງານປົກປ້ອງເງິນຝາກ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບຕ່າງໆ ທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ສະຖາບັນການເງິນ** ໝາຍເຖິງ ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ສ້າງຕັ້ງຂຶ້ນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
2. **ສະມາຊິກ** ໝາຍເຖິງ ສະຖາບັນການເງິນ ທີ່ເປັນສະມາຊິກຂອງສໍານັກງານປົກປ້ອງເງິນຝາກ;

3. **ເງິນຝາກ** ໝາຍເຖິງ ຈຳນວນເງິນໃນບັນຊີຂອງຜູ້ຝາກເງິນ ທີ່ຝາກໄວ້ນຳສະມາຊິກ;
4. **ຜູ້ຝາກເງິນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເອົາເງິນຂອງຕົນມາຝາກໄວ້ນຳສະມາຊິກ;
5. **ເບ້ຍປະກັນເງິນຝາກ** ໝາຍເຖິງ ຈຳນວນເງິນທີ່ສະມາຊິກ ຕ້ອງຈ່າຍໃຫ້ສຳນັກງານປົກປ້ອງເງິນຝາກ ຕາມອັດຕາເບ້ຍປະກັນ ທີ່ກຳນົດໄວ້ໃນແຕ່ລະໄລຍະ;
6. **ເງິນປົກປ້ອງ** ໝາຍເຖິງ ຈຳນວນເງິນທີ່ສຳນັກງານປົກປ້ອງເງິນຝາກຕ້ອງຈ່າຍຄືນ ໃຫ້ແກ່ຜູ້ຝາກເງິນ ຕາມວົງເງິນທີ່ໄດ້ກຳນົດໄວ້;
7. **ຄະນະຟື້ນຟູ** ໝາຍເຖິງ ຄະນະທີ່ໄດ້ຮັບການແຕ່ງຕັ້ງຈາກທະນາຄານແຫ່ງ ສປປ ລາວເພື່ອເຂົ້າຄວບຄຸມການດຳເນີນທຸລະກິດຂອງສະມາຊິກ ທີ່ພົບຄວາມຫຍຸ້ງຍາກທາງດ້ານການເງິນ ແລະ ຂາດຄວາມໝັ້ນຄົງ ຊຶ່ງອາດຈະພາໃຫ້ມີການລົ້ມລະລາຍ;
8. **ສະພາວະລົ້ມລະລາຍ** ໝາຍເຖິງ ສະພາບຂອງສະຖາບັນການເງິນໃດໜຶ່ງ ທີ່ພວມປະສົບກັບຄວາມຫຍຸ້ງຍາກ ຫຼື ຫຼຸບທຶນໃນການເຄື່ອນໄຫວທຸລະກິດ ພາຍຫຼັງທີ່ໄດ້ນຳໃຊ້ບັນດາວິທີການດ້ານການເງິນອັນຈຳເປັນແລ້ວ ແຕ່ກໍຍັງບໍ່ສາມາດຊຳລະໜີ້ສິນໄດ້ຕາມກຳນົດເວລາ ແລະ ໄດ້ຮັບການຢັ້ງຢືນຈາກທະນາຄານແຫ່ງ ສປປ ລາວ;
9. **ວັນສຸດທ້າຍຂອງການດຳເນີນທຸລະກິດ** ໝາຍເຖິງ ວັນທີ່ທະນາຄານແຫ່ງ ສປປ ລາວໄດ້ຢັ້ງຢືນສະພາວະລົ້ມລະລາຍ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານປົກປ້ອງເງິນຝາກ**

ລັດ ຊຸກຍູ້ ແລະ ສົ່ງເສີມການປົກປ້ອງເງິນຝາກ ດ້ວຍການວາງນະໂຍບາຍ, ລະບຽບການ ແລະ ມາດຕະການຕ່າງໆ ໃຫ້ສຳນັກງານປົກປ້ອງເງິນຝາກສາມາດເຄື່ອນໄຫວຢ່າງມີປະສິດທິຜົນ ໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຝາກເງິນ.

**ມາດຕາ 5 ຫຼັກການພື້ນຖານກ່ຽວກັບວຽກງານປົກປ້ອງເງິນຝາກ**

ການປົກປ້ອງເງິນຝາກ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
2. ມີຄວາມຍຸຕິທຳ, ໂປ່ງໃສ, ຖືກຕ້ອງ, ຄົບຖ້ວນ ແລະ ສາມາດກວດສອບໄດ້;
3. ຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ຝາກເງິນ, ສະມາຊິກ ແລະ ສຳນັກງານປົກປ້ອງເງິນຝາກ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບສຳນັກງານປົກປ້ອງເງິນຝາກ, ສະມາຊິກ, ຜູ້ຝາກເງິນແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານປົກປ້ອງເງິນຝາກ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປົກປ້ອງເງິນຝາກ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກນິກ ແລະ ວິຊາການ, ການພັດທະນາຊັບພະຍາກອນມະນຸດເພື່ອພັດທະນາວຽກງານດັ່ງກ່າວໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ການປົກປ້ອງເງິນຝາກ

**ມາດຕາ 8 ເງິນຝາກທີ່ໄດ້ຮັບການປົກປ້ອງ**

ເງິນຝາກທີ່ໄດ້ຮັບການປົກປ້ອງ ແມ່ນເງິນຝາກຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ບໍ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງດຳລັດສະບັບນີ້ ທີ່ຝາກໄວ້ນຳສະມາຊິກ ປະກອບດ້ວຍ ເງິນຝາກກະແສລາຍວັນ, ປະຢັດ ແລະ ມີກຳນົດ ທີ່ເປັນສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ ລວມທັງຕົ້ນທຶນ ແລະ ດອກເບ້ຍຕາມການກຳນົດຂອງສຳນັກງານປົກປ້ອງເງິນຝາກ.

**ມາດຕາ 9 ເງິນຝາກທີ່ບໍ່ໄດ້ຮັບການປົກປ້ອງ**

ເງິນຝາກທີ່ບໍ່ໄດ້ຮັບການປົກປ້ອງ ແມ່ນເງິນຝາກຂອງຜູ້ບໍລິຫານ, ຜູ້ຖືຮຸ້ນລາຍໃຫຍ່ ແລະ ສະມາຊິກສະພາບໍລິຫານຂອງສະຖາບັນການເງິນເອງ, ເງິນຝາກຂອງສະຖາບັນການເງິນອື່ນ, ເງິນຝາກຄັງເງິນແຫ່ງຊາດ,ເງິນຝາກຂອງອົງການຈັດຕັ້ງລັດ, ເງິນຝາກຂອງອົງການຈັດຕັ້ງສາກົນ ແລະເງິນຝາກສຳລັບຊື້-ຂາຍຫຼັກຊັບ.

**ມາດຕາ 10 ສິດ ແລະ ພັນທະຂອງຜູ້ຝາກເງິນ**

ຜູ້ຝາກເງິນມີສິດ ແລະ ພັນທະດັ່ງນີ້:

1. ໄດ້ຮັບການປົກປ້ອງເງິນຝາກທີ່ຝາກໄວ້ນຳສະມາຊິກ ຕາມວົງເງິນປົກປ້ອງ ແລະ ເວລາທີ່ກຳນົດໄວ້ໃນດຳລັດສະບັບນີ້;
2. ໄດ້ຮັບຂໍ້ມູນກ່ຽວກັບການປົກປ້ອງເງິນຝາກ ຈາກສະມາຊິກ ແລະ ສຳນັກງານປົກປ້ອງເງິນຝາກ;
3. ຮ້ອງທຸກຕໍ່ການຈັດຕັ້ງທີ່ກ່ຽວຂ້ອງ ກ່ຽວກັບການລະເມີດສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;
4. ສຶກສາຂໍ້ມູນຂອງສະຖາບັນການເງິນ ກ່ຽວກັບນະໂຍບາຍປົກປ້ອງເງິນຝາກ ຢ່າງລະອຽດກ່ອນການຕັດສິນໃຈເປີດບັນຊີເງິນຝາກ;
5. ສະໜອງຂໍ້ມູນທີ່ກ່ຽວຂ້ອງກັບການຝາກເງິນຂອງຕົນ ໃຫ້ສະມາຊິກ ແລະສຳນັກງານປົກປ້ອງເງິນຝາກຢ່າງຄົບຖ້ວນ ແລະ ຖືກຕ້ອງ;
6. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ການຈ່າຍເງິນປົກປ້ອງ

**ມາດຕາ 11 ວົງເງິນປົກປ້ອງ**

ວົງເງິນປົກປ້ອງ ແມ່ນວົງເງິນສູງສຸດ ທີ່ສຳນັກງານປົກປ້ອງເງິນຝາກ ຈ່າຍໃຫ້ຜູ້ຝາກເງິນທີ່ຝາກໄວ້ນຳສະມາຊິກໃດໜຶ່ງທີ່ຢູ່ໃນສະພາວະລົ້ມລະລາຍ ລວມທັງຕົ້ນທຶນ ແລະ ດອກເບ້ຍທີ່ຍັງເຫຼືອໃນວັນສຸດທ້າຍຂອງການດຳເນີນທຸລະກິດຂອງສະມາຊິກດັ່ງກ່າວ.

ທະນາຄານແຫ່ງ ສປປ ລາວເປັນຜູ້ຄົ້ນຄວ້າກຳນົດວົງເງິນປົກປ້ອງ ໃນແຕ່ລະໄລຍະບົນພື້ນຖານຮັບປະກັນໃຫ້ວົງເງິນປົກປ້ອງຕໍ່ຜູ້ຝາກເງິນແຕ່ລະລາຍ ບໍ່ໃຫ້ຫຼຸດ ສອງເທົ່າຂອງລວມຍອດຜະລິດຕະພັນພາຍໃນສະເລ່ຍ ຕໍ່ຫົວຄົນ.

**ມາດຕາ 12 ການຈ່າຍເງິນປົກປ້ອງ**

ສຳນັກງານປົກປ້ອງເງິນຝາກຕ້ອງດຳເນີນຂັ້ນຕອນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນທີ່ຝາກໄວ້ນຳສະມາຊິກນັບແຕ່ວັນທີ່ທະນາຄານແຫ່ງ ສປປ ລາວ ໄດ້ຢັ້ງຢືນສະພາວະລົ້ມລະລາຍ ເປັນຕົ້ນໄປ.

ເງິນປົກປ້ອງ ຕ້ອງຈ່າຍເປັນສະກຸນເງິນກີບທຽບເທົ່າ ຕາມອັດຕາແລກປ່ຽນທີ່ ທະນາຄານແຫ່ງ ສປປ ລາວ ກຳນົດໄວ້ ໃນວັນສຸດທ້າຍຂອງການດຳເນີນທຸລະກິດຂອງສະມາຊິກທີ່ຢູ່ໃນສະພາວະລົ້ມລະລາຍ.

**ມາດຕາ 13 ການກະກຽມການຈ່າຍເງິນປົກປ້ອງ**

ພາຍຫຼັງ ທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງແຕ່ງຕັ້ງຄະນະຟື້ນຟູ ຕ້ອງແຈ້ງໃຫ້ ສໍານັກງານປົກປ້ອງເງິນຝາກ ຊາບ ພາຍໃນກໍານົດ ສາມ ວັນລັດຖະການ.

ນັບແຕ່ວັນໄດ້ຮັບແຈ້ງການ, ສໍານັກງານປົກປ້ອງເງິນຝາກ ຕ້ອງກະກຽມໜ້າວຽກຕົ້ນຕໍ ດັ່ງນີ້:

1. ທົບທວນຄືນຂໍ້ມູນ ແລະ ຍອດເງິນຝາກຂອງຜູ້ຝາກເງິນ ພ້ອມທັງຄິດໄລ່ວົງເງິນປົກປ້ອງ ລວມທັງຕົ້ນທຶນ ແລະ ດອກເບ້ຍ ຂອງຜູ້ຝາກເງິນ;
2. ວາງແຜນຈ່າຍເງິນປົກປ້ອງ ແລະ ຮຽກເກັບຄືນໜີ້ສິນໃນຂະບວນການຊໍາລະສະສາງ;
3. ປະເມີນວົງເງິນປົກປ້ອງທີ່ຕ້ອງຈ່າຍທັງໝົດ ແລະ ວາງແຜນ ເພື່ອຊອກຫາແຫຼ່ງທຶນເພີ່ມ ໃນກໍລະນີຄັງປົກປ້ອງເງິນຝາກ ຫາກບໍ່ພຽງພໍ.

**ມາດຕາ 14 ຂັ້ນຕອນການຈ່າຍເງິນປົກປ້ອງ**

ການຈ່າຍເງິນປົກປ້ອງ ຕ້ອງດໍາເນີນຕາມຂັ້ນຕອນ ດັ່ງນີ້:

1. ສະມາຊິກທີ່ຢູ່ໃນສະພາວະລົ້ມລະລາຍ ສະເໜີຕໍ່ສໍານັກງານປົກປ້ອງເງິນຝາກ ພ້ອມທັງປະກອບຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງທັງໝົດ ພາຍໃນກໍານົດ ສິບຫ້າ ວັນ ນັບແຕ່ວັນທີ່ ທະນາຄານແຫ່ງ ສປປ ລາວ ໄດ້ຢັ້ງຢືນສະພາວະລົ້ມລະລາຍ ເປັນຕົ້ນໄປ;
2. ພາຍຫຼັງໄດ້ຮັບການສະເໜີ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ, ສໍານັກງານປົກປ້ອງເງິນຝາກ ຕ້ອງປະກາດໃຫ້ຜູ້ຝາກເງິນ ຊາບກ່ຽວກັບແຜນການຈ່າຍເງິນປົກປ້ອງ ພ້ອມທັງກໍານົດວັນເວລາ,ສະຖານທີ່ ແລະ ວິທີການຮັບເງິນປົກປ້ອງ ຜ່ານພາຫະນະສື່ມວນຊົນ ພາຍໃນກໍານົດ ຫົກສິບ ວັນ;
3. ຜູ້ຝາກເງິນ ຕ້ອງປະກອບເອກະສານຂໍຮັບເງິນປົກປ້ອງ ຢ່າງຖືກຕ້ອງ ແລະ ຄົບຖ້ວນຕາມແບບພິມທີ່ສໍານັກງານປົກປ້ອງເງິນຝາກໄດ້ກໍານົດໄວ້ ພາຍໃນກໍານົດເວລາ ເກົ້າສິບ ວັນ ນັບແຕ່ວັນທີ່ເລີ່ມປະກາດໃຫ້ມາຍື່ນເອກະສານ. ໃນກໍລະນີຈໍາເປັນ ສາມາດຂະຫຍາຍເວລາອອກໄປໄດ້ອີກ ສອງ ຄັ້ງ, ຄັ້ງລະບໍ່ເກີນ ເກົ້າສິບ ວັນ. ໃນກໍລະນີຜູ້ຝາກເງິນ ບໍ່ໄດ້ຍື່ນຄໍາຮ້ອງຕາມກໍານົດເວລາດັ່ງກ່າວ ຕ້ອງສະເໜີຂໍຮັບເງິນຝາກ ລວມທັງຕົ້ນທຶນ ແລະ ດອກເບ້ຍ ກັບຄະນະຊໍາລະສະສາງ ຕາມກົດໝາຍ ແລະ ລະບຽບການ;
4. ຜູ້ຝາກເງິນ ຈະໄດ້ຮັບເງິນປົກປ້ອງ ໃນວົງເງິນປົກປ້ອງສູງສຸດເທົ່ານັ້ນ, ສ່ວນຍອດເຫຼືອເງິນຝາກທີ່ເກີນວົງເງິນປົກປ້ອງ ໃຫ້ສະເໜີຕໍ່ຄະນະຊໍາລະສະສາງ. ການຈ່າຍເງິນປົກປ້ອງ ໃຫ້ປະຕິບັດພາຍຫຼັງຫັກໜີ້ສິນ ແລະ ຄ່າໃຊ້ຈ່າຍທີ່ຕິດພັນໜີ້ສິນ ຂອງຜູ້ຝາກເງິນ.

ສໍານັກງານປົກປ້ອງເງິນຝາກ ເປັນຜູ້ກໍານົດສະຖາບັນການເງິນໃດໜຶ່ງທີ່ເປັນສະມາຊິກ ເພື່ອເປັນຕົວແທນໃຫ້ຕົນໃນການດໍາເນີນການຈ່າຍເງິນປົກປ້ອງ. ໃນກໍລະນີຜູ້ຝາກເງິນ ຫາກບໍ່ມີບັນຊີໃນສະຖາບັນການເງິນທີ່ເປັນຕົວແທນ, ຜູ້ຝາກເງິນຕ້ອງເປີດບັນຊີໃນສະຖາບັນການເງິນດັ່ງກ່າວ ເພື່ອຮັບເງິນປົກປ້ອງ.

ຂັ້ນຕອນລະອຽດໃນການຈ່າຍເງິນປົກປ້ອງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 15 ການຊໍາລະສະສາງ**

ພາຍຫຼັງສານໄດ້ຕັດສິນໃຫ້ສະຖາບັນການເງິນລົ້ມລະລາຍແລ້ວ, ທະນາຄານແຫ່ງ ສປປ ລາວ ຕ້ອງແຕ່ງຕັ້ງຄະນະຊໍາລະສະສາງ ໂດຍມີຜູ້ຕາງໜ້າຈາກສໍານັກງານປົກປ້ອງເງິນຝາກເຂົ້າຮ່ວມ.

ບູລິມະສິດໃນການຊໍາລະສະສາງ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ດໍາລັດວ່າດ້ວຍສະຖາບັນການເງິນຈຸລະພາກ.

ສໍານັກງານປົກປ້ອງເງິນຝາກ ເປັນເຈົ້າໜີ້ຂອງສະຖາບັນການເງິນທີ່ລົ້ມລະລາຍ ໃນວົງເງິນທັງໝົດທີ່ໄດ້ຈ່າຍໃຫ້ຜູ້ຝາກເງິນ ແລະ ຈະໄດ້ຮັບການຊໍາລະຄືນຕາມບູລິມະສິດໃນການຊໍາລະສະສາງ.

## ໝວດທີ 4
## ສຳນັກງານປົກປ້ອງເງິນຝາກ

**ມາດຕາ 16 ສຳນັກງານປົກປ້ອງເງິນຝາກ**

ສຳນັກງານປົກປ້ອງເງິນຝາກ ຂຽນຫຍໍ້ວ່າ ສປງ, ແມ່ນການຈັດຕັ້ງການເງິນຂອງລັດມີຖານະທຽບເທົ່າກົມ, ເປັນນິຕິບຸກຄົນທີ່ເຄື່ອນໄຫວໂດຍບໍ່ສະແຫວງຫາຜົນກຳໄລ, ມີຄວາມເປັນເອກະລາດທາງດ້ານການເງິນ ແລະ ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 17 ສິດ ແລະ ໜ້າທີ່ຂອງສຳນັກງານປົກປ້ອງເງິນຝາກ**

ສຳນັກງານປົກປ້ອງເງິນຝາກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ນິຕິກຳກ່ຽວກັບວຽກງານປົກປ້ອງເງິນຝາກ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ຄົ້ນຄວ້າ ແລະ ສະເໜີ ທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາປະກອບທຶນເພີ່ມໃນແຕ່ລະໄລຍະ;
3. ອອກໃບຢັ້ງຢືນການເປັນ ຫຼື ການສິ້ນສຸດການເປັນສະມາຊິກ ຂອງສຳນັກງານປົກປ້ອງເງິນຝາກ;
4. ຄິດໄລ່ ແລະ ເກັບເບ້ຍປະກັນເງິນຝາກຈາກສະມາຊິກ ຕາມອັດຕາເບ້ຍປະກັນທີ່ກຳນົດໄວ້ ໃນແຕ່ລະໄລຍະ;
5. ຕິດຕາມກວດກາ ແລະ ວິເຄາະສະພາບຜູ້ຝາກເງິນ ແລະ ຈຳນວນເງິນຝາກຢູ່ນຳສະມາຊິກ ໃນແຕ່ລະໄລຍະ;
6. ສະເໜີຂໍຂໍ້ມູນທີ່ກ່ຽວຂ້ອງກັບວຽກງານປົກປ້ອງເງິນຝາກ ຈາກສະມາຊິກ ແລະ ພາກສ່ວນທີ່ກ່ຽວຂ້ອງ;
7. ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບວຽກງານປົກປ້ອງເງິນຝາກ ໃຫ້ບັນດາສະມາຊິກ ແລະ ສັງຄົມຮັບຊາບໃນແຕ່ລະໄລຍະ;
8. ບໍລິຫານທຶນ ແລະ ຄັງປົກປ້ອງເງິນຝາກໃນກິດຈະການທີ່ມີຄວາມສ່ຽງຕ່ຳ ເປັນຕົ້ນແມ່ນ ຊື້ພັນທະບັດຂອງລັດຖະບານ, ພັນທະບັດຂອງທະນາຄານກາງ ແລະ ຝາກໄວ້ກັບທະນາຄານແຫ່ງ ສປປ ລາວ;
9. ສະເໜີກູ້ຢືມເງິນຈາກ ສະຖາບັນການເງິນທັງພາຍໃນ ແລະ ຕ່າງປະເທດ ໂດຍລັດຖະບານເປັນຜູ້ຄ້ຳປະກັນ ຕາມການສະເໜີຂອງທະນາຄານແຫ່ງ ສປປ ລາວ;
10. ຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ ຕາມວົງເງິນປົກປ້ອງ ທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງດຳລັດສະບັບນີ້;
11. ຮຽກເກັບຄືນໜີ້ສິນ ໃນຂະບວນການຊຳລະຊະສາງ;
12. ປະສານສົມທົບກັບ ບັນດາກົມທີ່ຂຶ້ນກັບທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານປົກປ້ອງເງິນຝາກ;
13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານປົກປ້ອງເງິນຝາກ ໃຫ້ທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18 ໂຄງປະກອບການຈັດຕັ້ງ**

ສຳນັກງານປົກປ້ອງເງິນຝາກມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ສະພາບໍລິຫານ;
2. ຄະນະສຳນັກງານປົກປອງເງິນຝາກ;
3. ພະແນກການ;
4. ຂະແໜງການ.

ສິດ ແລະ ໜ້າທີ່ຂອງພະແນກການ ແລະ ຂະແໜງການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 19 ສະພາບໍລິຫານ**

ສະພາບໍລິຫານແມ່ນການຈັດຕັ້ງສູງສຸດຂອງສຳນັກງານປົກປ້ອງເງິນຝາກ, ມີພາລະບົດບາດຊີ້ນຳ-ນຳພາທຸກການເຄື່ອນໄຫວຂອງສຳນັກງານປົກປ້ອງເງິນຝາກລວມທັງຮັບຜິດຊອບຕໍ່ໜ້າທີ່ຕາມການມອບໝາຍຂອງທະນາຄານແຫ່ງ ສປປ ລາວ.

ສະພາບໍລິຫານຖືກແຕ່ງຕັ້ງ ໂດຍ ນາຍົກລັດຖະມົນຕີ ຊຶ່ງປະກອບດ້ວຍສະມາຊິກ ຈຳນວນ ເຈັດ ທ່ານ ດັ່ງນີ້:

| | | |
|---|---|---|
| 1. | ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ | ເປັນປະທານ; |
| 2. | ຫົວໜ້າກົມນະໂຍບາຍການເງິນກະຊວງການເງິນ | ເປັນຮອງປະທານ; |
| 3. | ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ | ເປັນກຳມະການ; |
| 4. | ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ | ເປັນກຳມະການ; |
| 5. | ນັກກົດໝາຍ | ເປັນກຳມະການ; |
| 6. | ນັກກວດສອບບັນຊີ | ເປັນກຳມະການ; |
| 7. | ຫົວໜ້າສຳນັກງານປົກປ້ອງເງິນຝາກ | ເປັນກຳມະການ ແລະ ເລຂາ. |

**ມາດຕາ 20 ສິດ ແລະ ໜ້າທີ່ຂອງສະພາບໍລິຫານ**

ສະພາບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາຮັບຮອງ ການສ້າງ ແລະ ການດັດແກ້ ແຜນຍຸດທະສາດ, ແຜນການ ຫ້າ ປີ, ແຜນການປະຈຳປີ ແລະ ບົດລາຍງານປະຈຳປີ ຕາມການສະເໜີຂອງຫົວໜ້າສຳນັກງານປົກປ້ອງເງິນຝາກ;
2. ຮັບຮອງເອົາກົດລະບຽບພາຍໃນ ແລະນິຕິກຳທີ່ກ່ຽວຂ້ອງ ຂອງສຳນັກງານປົກປ້ອງເງິນຝາກ;
3. ພິຈາລະນາຮັບຮອງນະໂຍບາຍກ່ຽວກັບການບໍລິຫານທຶນຂອງສຳນັກງານປົກປ້ອງເງິນຝາກ ແລະ ຄັງປົກປ້ອງເງິນຝາກ ຕາມການສະເໜີຂອງຫົວໜ້າສຳນັກງານປົກປ້ອງເງິນຝາກ;
4. ຊີ້ນຳ, ຄຸ້ມຄອງ ແລະ ຕິດຕາມກວດກາການບໍລິຫານວຽກງານຂອງສຳນັກງານປົກປ້ອງເງິນຝາກ;
5. ແຕ່ງຕັ້ງ ຫຼື ປົດຕຳແໜ່ງຄະນະພະແນກຂອງສຳນັກງານປົກປ້ອງເງິນຝາກ ຕາມການເຫັນດີຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງສຳນັກງານປົກປ້ອງເງິນຝາກ.

**ມາດຕາ 21 ຄະນະສຳນັກງານປົກປ້ອງເງິນຝາກ**

ຄະນະສຳນັກງານປົກປ້ອງເງິນຝາກ ເປັນຜູ້ບໍລິຫານວຽກງານປະຈຳວັນຂອງສຳນັກງານປົກປ້ອງເງິນຝາກ, ເປັນກອງເລຂາແລະ ລາຍງານຕໍ່ສະພາບໍລິຫານ.

ຄະນະສຳນັກງານປົກປ້ອງເງິນຝາກປະກອບດ້ວຍ ຫົວໜ້າ ແລະ ຮອງຫົວໜ້າຈຳນວນໜຶ່ງ.

ຫົວໜ້າສຳນັກງານປົກປ້ອງເງິນຝາກ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ.

ຮອງຫົວໜ້າສຳນັກງານປົກປ້ອງເງິນຝາກ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍຜູ້ວ່າການທະນາຄານແຫ່ງ ສປປ ລາວ.

**ມາດຕາ 22 ສິດ ແລະ ໜ້າທີ່ຂອງຫົວໜ້າສຳນັກງານປົກປ້ອງເງິນຝາກ**

ຫົວໜ້າສຳນັກງານປົກປ້ອງເງິນຝາກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມສະພາບໍລິຫານ;
2. ສ້າງ ຫຼື ດັດແກ້ແຜນຍຸດທະສາດ, ແຜນການ ຫ້າ ປີ, ແຜນການປະຈຳປີ, ບົດລາຍງານປະຈຳປີ ແລະ ນິຕິກຳ ເພື່ອສະເໜີສະພາບໍລິຫານ ພິຈາລະນາຮັບຮອງເອົາ;
3. ຄົ້ນຄວ້າອອກນິຕິກຳ ກ່ຽວກັບວຽກງານປົກປ້ອງເງິນຝາກ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ຄົ້ນຄວ້າກ່ຽວກັບນະໂຍບາຍການບໍລິຫານທຶນຂອງສຳນັກງານປົກປ້ອງເງິນຝາກ ແລະ ຄັງປົກປ້ອງເງິນຝາກ ເພື່ອສະເໜີສະພາບໍລິຫານ ພິຈາລະນາຮັບຮອງ;
5. ແຕ່ງຕັ້ງຫຼືປົດຕຳແໜ່ງຄະນະຂະແໜງຂອງສຳນັກງານປົກປ້ອງເງິນຝາກຕາມການເຫັນດີຂອງສະພາບໍລິຫານ;

6. ບໍລິຫານວຽກງານປະຈຳວັນຂອງສຳນັກງານປົກປ້ອງເງິນຝາກ ຕາມຂອບເຂດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນ ຫຼື ຕາມການມອບໝາຍຂອງສະພາບໍລິຫານ;
7. ເປັນຕົວແທນໃນການເຊັນສັນຍາ ແລະ ເອກະສານທາງການຕ່າງໆ ຂອງສຳນັກງານປົກປ້ອງເງິນຝາກ;
8. ຄົ້ນຄວ້າກ່ຽວກັບການຍ້ອງຍໍ ຫຼື ການລົງວິໄນ ຕໍ່ພະນັກງານຂອງສຳນັກງານປົກປ້ອງເງິນຝາກ;
9. ສະໜອງຂໍ້ມູນ ແລະ ຊີ້ແຈງບັນຫາ ຕໍ່ສະພາບໍລິຫານ ແລະ ຜູ້ກວດສອບພາຍນອກ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 23 ທຶນຂອງສຳນັກງານປົກປ້ອງເງິນຝາກ**

ລັດ ເປັນຜູ້ປະກອບທຶນໃຫ້ສຳນັກງານປົກປ້ອງເງິນຝາກ ໂດຍມອບໃຫ້ ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄົ້ນຄວ້າ ແລະ ສະເໜີ ລັດຖະບານ ພິຈາລະນາໃນແຕ່ລະໄລຍະຕາມການສະເໜີຂອງສະພາບໍລິຫານສຳນັກງານປົກປ້ອງເງິນຝາກ. ນອກຈາກນັ້ນ, ທຶນຂອງສຳນັກງານປົກປ້ອງເງິນຝາກ ຍັງໄດ້ມາຈາກລາຍໄດ້ສ່ວນຜົດດ່ຽງໃນການບໍລິຫານທຶນ ແລະ ການປະກອບສ່ວນຂອງພາກສ່ວນອື່ນ.

**ມາດຕາ24 ການນຳໃຊ້ທຶນຂອງສຳນັກງານປົກປ້ອງເງິນຝາກ**

ທຶນຂອງສຳນັກງານປົກປ້ອງເງິນຝາກນຳໃຊ້ເຂົ້າໃນການບໍລິຫານທຶນໃນກິດຈະການທີ່ມີຄວາມສ່ຽງຕ່ຳເປັນຕົ້ນແມ່ນ ຊື້ພັນທະບັດຂອງລັດຖະບານ ແລະ ພັນທະບັດຂອງທະນາຄານກາງ .

ສຳນັກງານປົກປ້ອງເງິນຝາກມີໜ້າທີ່ຄຸ້ມຄອງບໍລິຫານທຶນຂອງສຳນັກງານປົກປ້ອງເງິນຝາກໃຫ້ຄົງຕົວແລະຂະຫຍາຍຕົວ.

**ມາດຕາ 25 ການບັນຊີ**

ປີການບັນຊີຂອງສຳນັກງານປົກປ້ອງເງິນຝາກແມ່ນເລີ່ມວັນທີໜຶ່ງເດືອນມັງກອນ ແລະ ສິ້ນສຸດວັນທີສາມສິບເອັດ ເດືອນທັນວາ ຂອງທຸກໆປີ.

ສຳນັກງານປົກປ້ອງເງິນຝາກ ຕ້ອງປະຕິບັດລະບົບບັນຊີຕາມກົດໝາຍ ແລະ ລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ສຳນັກງານປົກປ້ອງເງິນຝາກຕ້ອງສ້າງບົດລາຍງານການເງິນ ຕາມແບບພິມ ແລະ ລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 26 ເອກະສານລາຍງານການເງິນ**

ເອກະສານລາຍງານການເງິນ ຂອງສຳນັກງານປົກປ້ອງເງິນຝາກ ມີດັ່ງນີ້:

1. ໃບລາຍງານຖານະການເງິນ;
2. ໃບລາຍງານຜົນການດຳເນີນງານ;
3. ໃບລາຍງານກະແສເງິນສົດ;
4. ໃບລາຍງານສ່ວນປ່ຽນແປງຂອງທຶນ.

ໃບລາຍງານຖານະການເງິນ ແລະ ໃບລາຍງານຜົນການດຳເນີນງານ ປະກອບດ້ວຍສາມ ຖັນ ຄື: ຖັນຂອງສຳນັກງານປົກປ້ອງເງິນຝາກ, ຖັນຂອງຄັງປົກປ້ອງເງິນຝາກ ແລະ ຖັນລວມ.

**ມາດຕາ 27 ລາຍຮັບ-ລາຍຈ່າຍ**

ລາຍຮັບ-ລາຍຈ່າຍ ຂອງສຳນັກງານປົກປ້ອງເງິນຝາກ ມີດັ່ງນີ້:

1. ລາຍຮັບ ປະກອບດ້ວຍ:
   - ດອກເບ້ຍ;
   - ເງິນແບ່ງປັນຈາກລາຍໄດ້ສ່ວນຜົດດ່ຽງຂອງການບໍລິຫານຄັງປົກປ້ອງເງິນຝາກ;
   - ເງິນປັບໃໝ;
   - ເງິນຈາກການຂາຍຊັບສົມບັດຄົງທີ່;
   - ລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ.

2. ລາຍຈ່າຍ ປະກອບດ້ວຍ:
   - ຄ່າໃຊ້ຈ່າຍບໍລິຫານ;
   - ຄ່າສ້ອມແປງ;
   - ຄ່າຫຼຸ້ຍຫ້ຽນ;
   - ຄ່າທຳນຽມ ແລະ ຄ່າບໍລິການ;
   - ດອກເບ້ຍ ແລະ ຄ່າໃຊ້ຈ່າຍໃນການກູ້ຢືມ;
   - ຄ່າໂຄສະນາ ແລະ ປະຊາສຳພັນ;
   - ລາຍຈ່າຍອື່ນ.

ຜົນໄດ້ຮັບໃນປີ ແມ່ນສ່ວນຜິດດ່ຽງບວກ ຫຼື ລົບ ລະຫວ່າງລາຍຮັບລົບລາຍຈ່າຍໃນປີ. ການແບ່ງປັນຜົນໄດ້ຮັບໃນປີ ເຂົ້າຄັງຕ່າງໆ ແມ່ນສະພາບໍລິຫານ ເປັນຜູ້ຕົກລົງ.

**ມາດຕາ 28 ການລາຍງານ**

ສຳນັກງານປົກປ້ອງເງິນຝາກ ຕ້ອງລາຍງານສະພາບການເຄື່ອນໄຫວ ແລະ ຖານະການເງິນຂອງຕົນໃຫ້ທະນາຄານແຫ່ງ ສປປ ລາວ ປະຈຳເດືອນ, ໄຕມາດ ແລະ ປີ.

## ໝວດທີ 5
## ຄັງປົກປ້ອງເງິນຝາກ

**ມາດຕາ 29 ຄັງປົກປ້ອງເງິນຝາກ**

ຄັງປົກປ້ອງເງິນຝາກແມ່ນ ຄັງທີ່ສຳນັກງານປົກປ້ອງເງິນຝາກສ້າງຂຶ້ນເພື່ອສະສົມ ແລະນຳໃຊ້ເບ້ຍປະກັນເງິນຝາກເຂົ້າໃນການຈ່າຍເງິນປົກປ້ອງ ເມື່ອສະມາຊິກໃດໜຶ່ງຫາກຕົກຢູ່ໃນສະພາວະລົ້ມລະລາຍ.

**ມາດຕາ 30 ທຶນຂອງຄັງປົກປ້ອງເງິນຝາກ**

ທຶນຂອງຄັງປົກປ້ອງເງິນຝາກ ໄດ້ມາຈາກເບ້ຍປະກັນເງິນຝາກຈາກສະມາຊິກ,ລາຍໄດ້ສ່ວນຜິດດ່ຽງຈາກການບໍລິຫານຄັງປົກປ້ອງເງິນຝາກ, ການປະກອບສ່ວນຂອງບຸກຄົນຫຼືນິຕິບຸກຄົນແລະການກູ້ຢືມ.

**ມາດຕາ 31 ການຄຸ້ມຄອງບໍລິຫານຄັງປົກປ້ອງເງິນຝາກ**

ສະພາບໍລິຫານອອກລະບຽບການກ່ຽວກັບການຄຸ້ມຄອງບໍລິຫານຄັງປົກປ້ອງເງິນຝາກ.

**ມາດຕາ 32 ການນຳໃຊ້ຄັງປົກປ້ອງເງິນຝາກ**

ຄັງປົກປ້ອງເງິນຝາກນຳໃຊ້ເຂົ້າໃນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ, ຊຳລະຄືນຕົ້ນທຶນແລະດອກເບ້ຍເງິນກູ້ຢືມ.

ລາຍໄດ້ສ່ວນຜິດດ່ຽງຈາກການບໍລິຫານຄັງປົກປ້ອງເງິນຝາກ ໃນແຕ່ລະປີ ສາມາດນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງສຳນັກງານປົກປ້ອງເງິນຝາກຕາມການຕົກລົງເຫັນດີຂອງສະພາບໍລິຫານ.

# ໝວດທີ 6
# ສະມາຊິກຂອງສຳນັກງານປົກປ້ອງເງິນຝາກ

**ມາດຕາ 33 ການເຂົ້າເປັນສະມາຊິກ**

ທະນາຄານທຸລະກິດ ທີ່ສ້າງຕັ້ງຂຶ້ນ ຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ກ່ອນ ຫຼື ຫຼັງ ດຳລັດສະບັບນີ້ມີຜົນສັກສິດ ຕ້ອງເຂົ້າເປັນສະມາຊິກແບບບັງຄັບ.

ທະນາຄານທຸລະກິດ ຕ້ອງຍື່ນຄຳຮ້ອງຕໍ່ສຳນັກງານປົກປ້ອງເງິນຝາກ ເພື່ອຂໍເຂົ້າເປັນສະມາຊິກ ພາຍໃນກຳນົດເວລາ ສິບຫ້າ ວັນ ນັບແຕ່ວັນທີ່ດຳລັດສະບັບນີ້ມີຜົນສັກສິດ ຫຼື ນັບແຕ່ວັນທີ່ໄດ້ຮັບອະນຸຍາດສ້າງຕັ້ງ. ເອກະສານປະກອບຂໍເຂົ້າເປັນສະມາຊິກ ມີດັ່ງນີ້:

1. ໃບຄຳຮ້ອງ;
2. ສຳເນົາໃບອະນຸຍາດສ້າງຕັ້ງ;
3. ສຳເນົາໃບທະບຽນວິສາຫະກິດ.

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກທີ່ສ້າງຕັ້ງຂຶ້ນ ຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ກ່ອນ ຫຼື ຫຼັງ ດຳລັດສະບັບນີ້ມີຜົນສັກສິດ ຕ້ອງເຂົ້າເປັນສະມາຊິກແລະ ມີມາດຖານເງື່ອນໄຂດັ່ງນີ້:

1. ໄດ້ຜ່ານການກວດສອບຈາກບໍລິສັດກວດສອບພາຍນອກຕິດຕໍ່ກັນຢ່າງໜ້ອຍສອງປີ;
2. ຕ້ອງປະກອບທຶນຈົດທະບຽນໃຫ້ໄດ້ຢ່າງໜ້ອຍຫ້າສິບສ່ວນຮ້ອຍຂອງທຶນຈົນທະບຽນຕໍ່າສຸດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 03 ຕຸລາ2012;
3. ຕ້ອງປະຕິບັດຕາມຂໍ້ກຳນົດກົດລະບຽບຕ່າງໆແລະອັດຕາສ່ວນຄວາມໝັ້ນຄົງທີ່ທະນາຄານແຫ່ງສປປລາວວາງອອກຢ່າງເຂັ້ມງວດ;
4. ສາມາດສົ່ງລາຍງານຕາມແບບພິມທີ່ທະນາຄານແຫ່ງສປປລາວວາງອອກໃນແຕ່ລະໄລຍະໄດ້ຢ່າງຖືກຕ້ອງ, ຄົບຖ້ວນ ແລະທັນເວລາ;
5. ມີຜົນກຳໄລຈາກການດຳເນີນທຸລະກິດຕິດຕໍ່ກັນຢ່າງໜ້ອຍສອງປີ;
6. ເງິນກູ້ທີ່ບໍ່ເກີດດອກອອກຜົນຫຼືໜີ້ທວງຍາກ (NPL) ຕ້ອງໜ້ອຍກວ່າຫ້າສ່ວນຮ້ອຍ;
7. ສາມາດມອບເບ້ຍປະກັນເງິນຝາກ ໃນອັດຕາທີ່ໄດ້ກຳນົດໄວ້ໃນກົດໝາຍແລະລະບຽບການ;

**ມາດຕາ 34 ສິດ ແລະ ພັນທະຂອງສະມາຊິກ**

ສະມາຊິກ ມີສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບໃບຢັ້ງຢືນການເຂົ້າເປັນສະມາຊິກ;
2. ຈ່າຍເບ້ຍປະກັນເງິນຝາກ ຕາມລະບຽບການສະເພາະ;
3. ສະໜອງຂໍ້ມູນຕາມແບບພິມທີ່ ສຳນັກງານປົກປ້ອງເງິນຝາກ ກຳນົດໄວ້ ປະຈຳເດືອນ, ໄຕມາດ ແລະ ປີ ຫຼື ຕາມການຮຽກຮ້ອງຂອງສຳນັກງານປົກປ້ອງເງິນຝາກ;
4. ປະກາດໃຫ້ສັງຄົມຮັບຊາບກ່ຽວກັບການເຂົ້າເປັນສະມາຊິກ ໂດຍຕິດປະກາດການຢັ້ງຢືນການເຂົ້າເປັນສະມາຊິກ ແລະ ຂໍ້ມູນກ່ຽວກັບການປົກປ້ອງເງິນຝາກ ຈາກສຳນັກງານປົກປ້ອງເງິນຝາກ ໄວ້ທຸກໜ່ວຍບໍລິການທີ່ຮັບເງິນຝາກ;
5. ໃຫ້ການຮ່ວມມືໃນການກວດກາ ແລະ ປະສານງານ ກັບພະນັກງານຂອງສຳນັກງານປົກປ້ອງເງິນຝາກ;
6. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 35 ອັດຕາເບ້ຍປະກັນເງິນຝາກ

ທະນາຄານແຫ່ງ ສປປ ລາວເປັນຜູ້ກຳນົດອັດຕາເບ້ຍປະກັນເງິນຝາກ ໃນແຕ່ລະໄລຍະ ຕາມການສະເໜີຂອງສຳນັກງານປົກປ້ອງເງິນຝາກ. ອັດຕາເບ້ຍປະກັນເງິນຝາກລວມທຸກສະກຸນສູງສຸດຕ້ອງບໍ່ເກີນ ໜຶ່ງສ່ວນຮ້ອຍ ຂອງຍອດເຫຼືອເງິນຝາກທີ່ໄດ້ຮັບການປົກປ້ອງສະເລ່ຍ ຕໍ່ປີ.

### ມາດຕາ 36 ການຈ່າຍເບ້ຍປະກັນເງິນຝາກ

ເບ້ຍປະກັນເງິນຝາກ ຕ້ອງຈ່າຍເປັນແຕ່ລະໄຕມາດ ຕາມປີການບັນຊີ ແລະ ຖືເປັນລາຍຈ່າຍຂອງສະມາຊິກ.

ຂັ້ນຕອນ ແລະ ວິທີການຈ່າຍເບ້ຍປະກັນເງິນຝາກ ໄດ້ກຳນົດໄວ້ໃນລະບຽບການສະເພາະຂອງສຳນັກງານປົກປ້ອງເງິນຝາກ.

### ມາດຕາ 37 ການສິ້ນສຸດການເປັນສະມາຊິກ

ສະຖາບັນການເງິນ ຈະສິ້ນສຸດການເປັນສະມາຊິກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຖືກຍຸບເລີກແລະ ຖອນໃບອະນຸຍາດສ້າງຕັ້ງ;
2. ພາຍຫຼັງທີ່ສຳນັກງານປົກປ້ອງເງິນຝາກ ສຳເລັດການຈ່າຍເງິນປົກປ້ອງ.

## ໝວດທີ 7
## ຂໍ້ຫ້າມ

### ມາດຕາ 38 ຂໍ້ຫ້າມສຳລັບຜູ້ບໍລິຫານ ແລະ ພະນັກງານສຳນັກງານປົກປ້ອງເງິນຝາກ

ຫ້າມຜູ້ບໍລິຫານ ແລະ ພະນັກງານສຳນັກງານປົກປ້ອງເງິນຝາກ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນພະນັກງານວິຊາການໃຫ້ກັບສະມາຊິກ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;
2. ເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງຂອງສະມາຊິກ;
3. ທວງເອົາ, ຂໍເອົາ, ຮັບສິນບົນ, ລຳອຽງ, ກົດໜ່ວງຖ່ວງດຶງ, ສົມຮູ້ຮ່ວມຄິດ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ ກ່ຽວກັບການດຳເນີນງານຂອງສຳນັກງານປົກປ້ອງເງິນຝາກ;
4. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ຫຼື ຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງຂອງສຳນັກງານປົກປ້ອງເງິນຝາກ;
5. ຊື້ຊັບສິນຂອງສະມາຊິກທີ່ລົ້ມລະລາຍ ດ້ວຍຮູບການໃດໆ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 39 ຂໍ້ຫ້າມສຳລັບສະມາຊິກ

ຫ້າມສະມາຊິກ ມີພຶດຕິກຳ ດັ່ງນີ້:

1. ບໍ່ຈ່າຍເບ້ຍປະກັນເງິນຝາກ ຫຼື ຈ່າຍບໍ່ຄົບຖ້ວນຕາມຈຳນວນ;
2. ບໍ່ລາຍງານຖານະການເງິນ ແລະ ຂໍ້ມູນເງິນຝາກ ໃຫ້ສຳນັກງານປົກປ້ອງເງິນຝາກ ຢ່າງເປັນປົກກະຕິ;
3. ປອມແປງເອກະສານ ທີ່ກ່ຽວພັນກັບການປົກປ້ອງເງິນຝາກ ຊຶ່ງສ້າງຄວາມເສຍຫາຍຕໍ່ສິດ ແລະ ຜົນປະໂຫຍດຂອງຜູ້ຝາກເງິນ ແລະ ສຳນັກງານປົກປ້ອງເງິນຝາກ;
4. ໂຄສະນາ ຫຼື ສະໜອງຂໍ້ມູນກ່ຽວກັບການປົກປ້ອງເງິນຝາກ ທີ່ບໍ່ຖືກຕ້ອງ ຫຼື ເກີນຄວາມເປັນຈິງຕໍ່ມວນຊົນ;
5. ຂັດຂວາງ, ບໍ່ອຳນວຍຄວາມສະດວກ ຫຼື ບໍ່ໃຫ້ການຮ່ວມມື ໃນການປະຕິບັດໜ້າທີ່ຂອງພາກສ່ວນທີ່ກ່ຽວຂ້ອງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 40 ຂໍ້ຫ້າມສໍາລັບຜູ້ຝາກເງິນ**

ຫ້າມຜູ້ຝາກເງິນ ມີພຶດຕິກໍາ ດັ່ງນີ້:

1. ສົ່ງອຸປະສັກກີດຂວາງ, ແຊກແຊງວຽກງານຂອງສໍານັກງານປົກປ້ອງເງິນຝາກໃນເວລາເຄື່ອນໄຫວວຽກງານປົກປ້ອງເງິນຝາກ;
2. ປອມແປງເອກະສານກ່ຽວກັບເງິນຝາກຂອງຕົນ ໃນເວລາມາຮັບເງິນປົກປ້ອງ;
3. ໂຄສະນາບໍ່ຖືກຕ້ອງກ່ຽວກັບການປົກປ້ອງເງິນຝາກ ທີ່ພາໃຫ້ຜູ້ອື່ນເຂົ້າໃຈຜິດ ຫຼື ໃສ່ຮ້າຍປ້າຍສີສໍານັກງານປົກປ້ອງເງິນຝາກ;
4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຄຸ້ມຄອງ ແລະ ການກວດກາ

**ມາດຕາ 41 ອົງການຄຸ້ມຄອງ**

ລັດຖະບານ ຄຸ້ມຄອງວຽກງານປົກປ້ອງເງິນຝາກ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 42 ສິດ ແລະ ໜ້າທີ່ຂອງທະນາຄານແຫ່ງ ສປປ ລາວ**

ໃນການຄຸ້ມຄອງ ສໍານັກງານປົກປ້ອງເງິນຝາກທະນາຄານແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງແຜນຍຸດທະສາດ ແລະ ນະໂຍບາຍລວມກ່ຽວກັບວຽກງານປົກປ້ອງເງິນຝາກ;
2. ຄົ້ນຄວ້າອອກນິຕິກໍາກ່ຽວກັບວຽກງານປົກປ້ອງເງິນຝາກ;
3. ຄົ້ນຄວ້າສະເໜີ ນາຍົກລັດຖະມົນຕີ ພິຈາລະນາແຕ່ງຕັ້ງ ສະພາບໍລິຫານ ແລະ ຫົວໜ້າສໍານັກງານປົກປ້ອງເງິນຝາກ;
4. ແຕ່ງຕັ້ງ ຫຼືປົດຕໍາແໜ່ງຮອງຫົວໜ້າສໍານັກງານປົກປ້ອງເງິນຝາກ ຕາມການສະເໜີຂອງສະພາບໍລິຫານ;
5. ທວງເອົາຂໍ້ມູນ ຫຼື ເອກະສານກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສໍານັກງານປົກປ້ອງເງິນຝາກ;
6. ຄຸ້ມຄອງການເຄື່ອນໄຫວຂອງສໍານັກງານປົກປ້ອງເງິນຝາກ ແລະ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນການນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 43 ອົງການກວດກາ**

ອົງການກວດກາວຽກງານປົກປ້ອງເງິນຝາກ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 41 ຂອງດໍາລັດສະບັບນີ້;
2. ອົງການກວດກາພາຍນອກ ແມ່ນອົງການກວດສອບແຫ່ງລັດ.

**ມາດຕາ 44 ເນື້ອໃນການກວດກາ**

ການກວດກາວຽກງານປົກປ້ອງເງິນຝາກ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກໍາກ່ຽວກັບການປົກປ້ອງເງິນຝາກ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສໍານັກງານປົກປ້ອງເງິນຝາກ;
3. ທຶນ ແລະ ຖານະການເງິນຂອງສໍານັກງານປົກປ້ອງເງິນຝາກ;
4. ການກວດກາອື່ນ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 45 ຮູບການກວດກາ**

ການກວດກາວຽກງານປົກປ້ອງເງິນຝາກ ມີສາມຮູບການດັ່ງນີ້:

1. ການກວດກາປົກກະຕິ;
2. ການກວດກາໂດຍມີການແຈ້ງລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາປົກກະຕິ ແມ່ນການກວດກາຕາມແຜນການ ແລະ ມີການກຳນົດເວລາທີ່ແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າຢ່າງໜ້ອຍຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນການກວດກາໃນເວລາທີ່ມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ ສຳນັກງານປົກປ້ອງເງິນຝາກ ຮູ້ກ່ອນລ່ວງໜ້າ.

ການກວດກາໃຫ້ດຳເນີນທັງການກວດກາເອກະສານ ແລະ ລົງກວດກາຕົວຈິງຢູ່ສະຖານທີ່ປະຕິບັດວຽກງານທີ່ກ່ຽວຂ້ອງ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 46 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນແມ່ນການເຮັດໃຫ້ວຽກງານປົກປ້ອງເງິນຝາກມີປະສິດທິຜົນ ແລະ ມີປະສິດທິພາບສູງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 47 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງກັບການປົກປ້ອງເງິນຝາກ ຊຶ່ງສ້າງຄວາມເສຍຫາຍແກ່ລັດ ແລະ ສັງຄົມ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາຕາມແຕ່ລະກໍລະນີເບົາ ຫຼື ໜັກ.

**ມາດຕາ 48 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນຂໍ້ຫ້າມທີ່ມີລັກສະນະເບົາບາງ ແລະ ເປັນການລະເມີດເທື່ອທຳອິດໂດຍບໍ່ເຈດຕະນາ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ ພ້ອມທັງເຮັດບົດບັນທຶກເປັນລາຍລັກອັກສອນ.

**ມາດຕາ 49 ມາດຕະການທາງວິໄນ**

ຜູ້ບໍລິຫານ ຫຼື ພະນັກງານຂອງສຳນັກງານປົກປ້ອງເງິນຝາກ ທີ່ລະເມີດຂໍ້ຫ້າມທີ່ກຳນົດໄວ້ໃນມາດຕາ 38 ຂອງດຳລັດສະບັບນີ້ ຈະຖືກລົງວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ພ້ອມທັງບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າເກົ່າ;
4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ. ໃນກໍລະນີມີຄວາມເສຍຫາຍຫຼາຍ ໃຫ້ດຳເນີນຄະດີຕາມກົດໝາຍ.

**ມາດຕາ 50 ມາດຕະການປັບໃໝ**

ສະມາຊິກໃດໜຶ່ງ ຫາກລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 39 ຂໍ້ 1 ຂອງດຳລັດສະບັບນີ້ ຈະຖືກປັບໃໝ 0,05% ຕໍ່ວັນຂອງຈຳນວນເງິນຄ້າງຈ່າຍ ພາຍຫຼັງ ຫ້າ ວັນລັດຖະການ ທີ່ຕັກເຕືອນແລ້ວ.

**ມາດຕາ 51 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ອັນເນື່ອງມາຈາກວຽກງານປົກປ້ອງເງິນຝາກ ຈະຕ້ອງໄດ້ໃຊ້ແທນຄ່າເສຍຫາຍທາງແພ່ງ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 52 ມາດຕະການທາງອາຍາ**

ບຸກຄົນ ທີ່ລະເມີດລະບຽບກົດໝາຍກ່ຽວກັບການປົກປ້ອງເງິນຝາກ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມກົດໝາຍອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 53 ເຄື່ອງໝາຍ ແລະ ຕາປະທັບ**

ສຳນັກງານປົກປ້ອງເງິນຝາກ ມີເຄື່ອງໝາຍ ແລະ ຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນວຽກງານລັດຖະການ.

**ມາດຕາ 54 ການຈັດຕັ້ງປະຕິບັດ**

ມອບໃຫ້ທະນາຄານແຫ່ງ ສປປ ລາວ, ກະຊວງການເງິນ, ສຳນັກງານປົກປ້ອງເງິນຝາກ, ບັນດາສະມາຊິກ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດຂອງຕົນ.

**ມາດຕາ 55 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະບານແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ